**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຄຸ້ມຄອງວິສາຫະກິດ

ເລກທີ 1243 /ກຄວ

ນະຄອນຫຼວງວຽງຈັນ, ວັນທີ 08 ມິຖຸນາ 2026

# ແຈ້ງການແນະນຳ

**ເຖິງ** : - ພາກລັດ ແລະ ເອກະຊົນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງ;
- ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຂັ້ນຕອນ ການຕິດຕາມ, ການແຈ້ງປະກອບທຶນຈົດທະບຽນ, ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ ແລະ ການນຳໃຊ້ຮ່າງແບບພິມ ກ່ຽວກັບ ການປະກອບທຶນຈົດທະບຽນວິສາຫະກິດ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 2003/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025.

ເພື່ອຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ໃຫ້ມີ ວິທີການ ແລະ ຂັ້ນຕອນ ກ່ຽວກັບວຽກງານຄຸ້ມຄອງການປະກອບທຶນຈົດທະບຽນວິສາຫະກິດ ແນໃສ່ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມສະດວກ, ລະອຽດ, ຊັດເຈນ ແລະ ສາມາດຕິດຕາມ, ກວດກາ ການປະກອບທຶນຈົດທະບຽນວິສາຫະກິດ ເປັນເອກະພາບໃນຂອບເຂດທົ່ວປະເທດ. ສະນັ້ນ, ກົມຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການແນະນຳ ມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

## 1. ການຕິດຕາມການປະກອບທຶນຈົດທະບຽນວິສາຫະກິດຂອງເຈົ້າໜ້າທີ່ທະບຽນວິສາຫະກິດ

ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ອອກໃບທະບຽນວິສາຫະກິດ ຕ້ອງປະຕິບັດ ດັ່ງນີ້:

- ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດໃໝ່ພາຍຫຼັງຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025 ມີຜົນສັກສິດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເລີ່ມຕິດຕາມພາຍໃນເວລາ 01 ປີ ນັບແຕ່ວັນທີທີ່ໄດ້ຂຶ້ນທະບຽນວິສາຫະກິດຈົນເຖິງວັນທີຄົບຮອບຂອງວັນທີດັ່ງກ່າວຂອງປີຖັດໄປ ຕົວຢ່າງ: ຫົວໜ່ວຍທີ່ຂຶ້ນທະບຽນວິສາຫະກິດໃໝ່ ໃນວັນທີ 23/10/2025 ຕ້ອງເລີ່ມຕິດຕາມຈາກວັນທີດັ່ງກ່າວ ຈົນຮອດວັນທີ 23/10/2026; ຫົວໜ່ວຍທີ່ຂຶ້ນທະບຽນວິສາຫະກິດໃໝ່ ໃນວັນທີ 24/10/2025 ຕ້ອງເລີ່ມຕິດຕາມຈາກວັນທີດັ່ງກ່າວ ຈົນຮອດວັນທີ 24/10/2026.
- ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດກ່ອນຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025 (ມີຜົນສັກສິດໃນວັນທີ 23/10/2025 ເປັນຕົ້ນໄປ) ແມ່ນໃຫ້ເລີ່ມຕິດຕາມພາຍໃນເວລາ 01 ປີ ນັບແຕ່ວັນທີ 23/10/2025 ຫາ ວັນທີ 23/10/2026.

ການຫຼຸດທຶນຈົດທະບຽນວິສາຫະກິດ ແລະ ປ່ຽນແປງ ເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ໃໝ່ ຕ້ອງປະກອບທຶນຈົດທະບຽນວິສາຫະກິດ ໃຫ້ຄົບຖ້ວນ ຕາມກຳນົດເວລາທີ່ຍັງເຫຼືອຂອງການປະກອບທຶນຈົດທະບຽນ ນັບແຕ່ວັນທີທີ່ໄດ້ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດກ່ຽວກັບຫຼຸດທຶນຈົດທະບຽນວິສາຫະກິດເປັນຕົ້ນໄປ.

ສຳລັບ ການເພີ່ມທຶນຈົດທະບຽນວິສາຫະກິດ ຕ້ອງປະກອບທຶນຈົດທະບຽນ ຕາມຈຳນວນທຶນທີ່ເພີ່ມຂຶ້ນໃຫ້ຄົບຖ້ວນ ພາຍໃນເວລາ 01 ປີ ນັບແຕ່ວັນທີທີ່ໄດ້ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດກ່ຽວກັບການເພີ່ມທຶນຈົດທະບຽນວິສາຫະກິດເປັນຕົ້ນໄປ.

ພາຍຫຼັງໝົດກຳນົດເວລາ 01 ປີ, ວິສາຫະກິດ ບໍ່ໄດ້ແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນອອກໃບທະບຽນວິສາຫະກິດ ອອກແຈ້ງການໃຫ້ວິສາຫະກິດເຂົ້າມາພົວພັນກັບເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອໃຫ້ຍື່ນຄຳຮ້ອງແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດພາຍໃນ 60 ວັນ ນັບແຕ່ວັນທີໝົດກຳນົດເວລາປະກອບທຶນຈົດທະບຽນວິສາຫະກິດ. ພາຍຫຼັງກຳນົດເວລາດັ່ງກ່າວແລ້ວ ແມ່ນໃຫ້ນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂອງແຈ້ງການແນະນຳສະບັບນີ້.

**2. ຂັ້ນຕອນ ແລະ ເອກະສານປະກອບ**

2.1 ຂັ້ນຕອນ:

1) ວິສາຫະກິດ ທີ່ໄດ້ປະກອບທຶນຈົດທະບຽນວິສາຫະກິດແລ້ວ ແມ່ນໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ.

2) ພາຍຫຼັງ ໄດ້ຮັບເອກະສານແລ້ວ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງກວດກາ ຈຳນວນ, ປະເພດເອກະສານ, ຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງເນື້ອໃນເອກະສານ ຕາມແຈ້ງການແນະນຳສະບັບນີ້ ພ້ອມລົງລາຍເຊັນຜູ້ຮັບ ແລະ ຜູ້ຍື່ນຄຳຮ້ອງ ໃສ່ໃບກວດເອກະສານ ແລະ ໃຫ້ປະຕິບັດ ດັ່ງນີ້:

- ຫຼັງຈາກ ເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕ້ອງແຈ້ງຜູ້ຍື່ນຄຳຮ້ອງຊາບ, ຊຶ່ງເຈົ້າໜ້າທີ່ທະບຽນວິສາຫະກິດ **ຕ້ອງອອກໜັງສືຮັບຮູ້ການປະກອບທຶນຈົດທະບຽນວິສາຫະກິດ** ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນຮັບເອກະສານເປັນຕົ້ນໄປ;

- ກໍລະນີ ເອກະສານບໍ່ຄົບຖ້ວນ ແລະ/ຫຼື ບໍ່ຖືກຕ້ອງ ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງແນະນຳໃຫ້ຜູ້ຍື່ນຄຳຮ້ອງຊາບ ເພື່ອປັບປຸງແກ້ໄຂ ໂດຍຕ້ອງແນະນຳຈຸດທີ່ຕ້ອງປັບປຸງແກ້ໄຂຢ່າງຈະແຈ້ງ ໃສ່ໃນໃບກວດກາເອກະສານດັ່ງກ່າວ. ພາຍຫຼັງ ປັບປຸງແກ້ໄຂຄົບຖ້ວນ ແລະ ຖືກຕ້ອງແລ້ວ ແມ່ນໃຫ້ປະຕິບັດຕາມຂັ້ນຕອນ ແລະ ເວລາ ຕາມທີ່ກຳນົດໄວ້ໃນຂີດໝ້າຖັດເທິງນີ້.

2.2 ເອກະສານປະກອບ:

1) ຄຳຮ້ອງ ແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດ;
2) ສຳເນົາ ຊຸດທະບຽນວິສາຫະກິດ;
3) ໃບມອບສິດ ພ້ອມດ້ວຍ ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ແລະ ສຳເນົາໜັງສືຜ່ານແດນສຳລັບຄົນຕ່າງປະເທດ ທີ່ຍັງມີອາຍຸການນຳໃຊ້ ໃນກໍລະນີ ຜູ້ຈັດການ, ຜູ້ອຳນວຍການ, ເຈົ້າຂອງວິສາຫະກິດ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ບໍ່ໄດ້ມາດ້ວຍຕົນເອງ;
4) ສຳເນົາ ໃບຮຸ້ນ (ສຳລັບ ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ);
5) ສຳເນົາ ເອກະສານຢັ້ງຢືນຖານະການເງິນຂອງວິສາຫະກິດຈາກທະນາຄານທຸລະກິດ;
6) ສຳເນົາ ໜັງສືຈາກຂະແໜງການທະນາຄານແຫ່ງ ສປປ ລາວ (ສຳລັບ ການນຳໃຊ້ແຫຼ່ງທຶນພາຍໃນ);
7) ສຳເນົາ ໜັງສືຢັ້ງຢືນການນຳເຂົ້າທຶນຈາກຕ່າງປະເທດ ຈາກຂະແໜງການທະນາຄານແຫ່ງ ສປປ ລາວ (ສຳລັບ ການນຳໃຊ້ແຫຼ່ງທຶນຕ່າງປະເທດ);
8) ສຳເນົາ ໃບທະບຽນຍານພາຫະນະ (ທັງສະບັບເກົ່າ ທີ່ອອກຊື່ຜູ້ປະກອບທຶນ ແລະ ສະບັບໃໝ່ ທີ່ອອກຊື່ວິສາຫະກິດ) ສຳລັບ ທຶນຈົດທະບຽນວິສາຫະກິດເປັນວັດຖຸ;
9) ສຳເນົາ ໃບຕາດິນ (ທັງສະບັບເກົ່າ ທີ່ອອກຊື່ຜູ້ປະກອບທຶນ ແລະ ສະບັບໃໝ່ ທີ່ອອກຊື່ວິສາຫະກິດ) ສຳລັບ ທຶນຈົດທະບຽນວິສາຫະກິດເປັນວັດຖຸ.

**3. ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ**

ວິສາຫະກິດ ທີ່ບໍ່ຍື່ນຄຳຮ້ອງແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດ ພາຍໃນເວລາ 60 ວັນ ຕາມແຈ້ງການຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ແມ່ນຈະຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດ ເຮັດໃຫ້ບໍ່ສາມາດນຳໃຊ້ໃບທະບຽນວິສາຫະກິດດັ່ງກ່າວເຂົ້າໃນການເຄື່ອນໄຫວທຸລະກິດ.

1) ກໍລະນີ ວິສາຫະກິດ ມີຈຸດປະສົງສືບຕໍ່ນຳໃຊ້ໃບທະບຽນວິສາຫະກິດ ແມ່ນໃຫ້ປັບໃໝ ແລະ ເຮັດບົດບັນທຶກ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ.

2) ກໍລະນີ ມີຈຸດປະສົງຍຸບເລີກວິສາຫະກິດ ແມ່ນໃຫ້ປັບໃໝ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ແລະ ແນະນຳໃຫ້ວິສາຫະກິດປະກອບເອກະສານຍຸບເລີກ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ.

**4. ຮ່າງແບບພິມ ກ່ຽວກັບ ວຽກງານຕິດຕາມການປະກອບທຶນຈົດທະບຽນວິສາຫະກິດ**

ກ. ຮ່າງ ແບບພິມ ສຳລັບວິສາຫະກິດ:

1) ຄຳຮ້ອງ ແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດສ່ວນບຸກຄົນ;

2) ຄຳຮ້ອງ ແຈ້ງກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດຮຸ້ນສ່ວນ;

3) ຄຳຮ້ອງ ແຈ້ງກ່ຽວກັບການປະກອບທຶນຈົດທະບຽນຂອງບໍລິສັດ.

ຂ. ຮ່າງ ແບບພິມເອກະສານ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ:

1) ໃບກວດເອກະສານ ການປະກອບທຶນຈົດທະບຽນວິສາຫະກິດ;

2) ຕາຕະລາງຕິດຕາມການປະກອບທຶນຈົດທະບຽນວິສາຫະກິດ;

3) ໜັງສືຮັບຮູ້ ການປະກອບທຶນຈົດທະບຽນ ວິສາຫະກິດສ່ວນບຸກຄົນ;

4) ໜັງສືຮັບຮູ້ ການປະກອບທຶນຈົດທະບຽນ ວິສາຫະກິດຮຸ້ນສ່ວນ;

5) ໜັງສືຮັບຮູ້ ການປະກອບທຶນຈົດທະບຽນວິສາຫະກິດຂອງບໍລິສັດ;

6) ບົດບັນທຶກ ການບໍ່ປະກອບທຶນຈົດທະບຽນວິສາຫະກິດ;

7) ແຈ້ງການ ໃຫ້ວິສາຫະກິດເຂົ້າມາພົວພັນກ່ຽວກັບການປະກອບທຶນຈົດທະບຽນວິສາຫະກິດ;

8) ແຈ້ງການ ໂຈະການນຳໃຊ້ໃບທະບຽນວິສາຫະກິດ;

9) ແຈ້ງການ ຍົກເລີກໂຈະການນຳໃຊ້ໃບທະບຽນວິສາຫະກິດ.

(ລາຍລະອຽດເນື້ອໃນຂອງແຕ່ລະຮ່າງແບບພິມ ແມ່ນຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຫົວໜ້າກົມ**

ດາວໂຫຼດແບບພິມ

**ອະພິສິດ ແສງສຸລິວົງ**